**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ 0117 /ກປ

ນະຄອນຫຼວງວຽງຈັນ, ວັນທີ 17 JAN 2022

# ແຈ້ງການ

**ເຖິງ :** ທ່ານ ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ ແຂວງ ແລະ ນະຄອນຫຼວງວຽງຈັນ.

**ເລື່ອງ :** ໃຫ້ຢຸດຕິ ການອອກອະນຸຍາດ ເຄື່ອນຍ້າຍຖ່ານດຳ ເພື່ອສົ່ງອອກຕ່າງປະເທດ.

- ອີງຕາມ ກົດໝາຍວ່າດ້ວຍປ່າໄມ້, ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້, ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ຄຳສັ່ງ ຂອງນາຍົກລັດຖະມົນຕີ ວ່າດ້ວຍ ການເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງ ແລະ ກວດກາ ການຂຸດຄົ້ນໄມ້, ການເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້ ສະບັບເລກທີ 15/ນຍ, ລົງວັນທີ 13 ພຶດສະພາ 2016;
- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ວ່າດ້ວຍການຮັບຮອງເອົາລາຍການ ຜະລິດຕະພັນໄມ້ ເພື່ອສົ່ງອອກ, ສະບັບເລກທີ 0851/ອຄ, ລົງວັນ ທີ 14 ກັນຍາ 2021.

ກະຊວງກະສິກຳ ແລະ ປ່າໄມ້ ຂໍແຈ້ງມາຍັງທ່ານຊາບວ່າ: ໃນໄລຍະຜ່ານມາ, ມີຫຼາຍທ້ອງຖິ່ນ ໄດ້ອອກອະນຸຍາດ ເຄື່ອນຍ້າຍຖ່ານດຳ ຊຶ່ງອ້າງວ່າ ແມ່ນຖ່ານດຳທີ່ຜະລິດຈາກໄມ້ປູກ ເປັນຂະບວນການ ແລະ ມີຈຳນວນຫຼວງຫຼາຍ ເພື່ອສົ່ງອອກໄປຕ່າງປະເທດ ໂດຍຜ່ານຈຸດຕ່າງໆ ເຊັ່ນ: ສະຖານີລົດໄຟ, ດ່ານສາກົນ ແລະ ດ່ານປະເພນີ ອື່ນໆ. ຜ່ານການກວດກາຕົວຈິງ ເຫັນວ່າ ມີການສວຍໂອກາດ ເກັບຊື້ຖ່ານດຳ ທີ່ຜະລິດຈາກໄມ້ທຳມະຊາດ, ຈາກເຕົາເຜົາຖ່ານ ທີ່ບໍ່ໄດ້ຮັບອະນຸຍາດສ້າງຕັ້ງ ປະປົນໄປນຳ ເປັນຈຳນວນຫຼວງຫຼາຍ ຊຶ່ງເປັນການທຳລາຍປ່າໄມ້ທຳມະຊາດຢ່າງໜັກໜ່ວງ ແລະ ເປັນການລະເມີດ ກົດໝາຍວ່າດ້ວຍປ່າໄມ້ ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019 ໃນມາດຕາ 95, 96 ແລະ 98 ແລະ ຂັດກັບ ຄຳສັ່ງ ຂອງນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 13 ພຶດສະພາ 2016 (ຂໍ້ທີ 8), ຂໍ້ຕົກລົງ ຂອງລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 0851/ອຄ, ລົງວັນທີ 14 ກັນຍາ 2021, ຄຳແນະນຳ ຂອງລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 0054/ກປ, ລົງວັນທີ 09 ມິຖຸນາ 2016 (ຂໍ້ທີ 5.6), ແຈ້ງການ ສະບັບເລກທີ 0073/ກປ, ລົງວັນທີ 3 ພະຈິກ 2016 (ຂໍ້ທີ 6 ແລະ 7) ແລະ ລະບຽບການອື່ນໆທີ່ກ່ຽວຂ້ອງ. ສະນັ້ນ, ເພື່ອເປັນການແກ້ໄຂ ປະກົດການຫຍໍ້ທໍ້ ດັ່ງກ່າວ, ກະຊວງກະສິກຳ ແລະ ປ່າໄມ້ ຈຶ່ງແຈ້ງມາຍັງທ່ານ ປະຕິບັດດັ່ງນີ້:

1. ໃຫ້ຢຸດຕິ ການອອກອະນຸຍາດ ເຄື່ອນຍ້າຍຖ່ານດຳ ເພື່ອສົ່ງອອກໄປຕ່າງປະເທດ ຢ່າງເດັດຂາດ;
2. ໃຫ້ດຳເນີນການກວດກາ ແລະ ຂຶ້ນບັນຊີ ໂຮງງານຜະລິດຖ່ານ, ເຕົາເຜົາຖ່ານ ໃນຂອບເຂດແຂວງຂອງຕົນ. ຖ້າມີການອະນຸຍາດສ້າງຕັ້ງ ແລະ ດຳເນີນກິດຈະການ ແຕ່ບໍ່ມີແຫຼ່ງທີ່ມາຂອງວັດຖຸດິບທີ່ຈະແຈ້ງ ແລະ ຖືກຕ້ອງຕາມລະບຽບກົດໝາຍ ແມ່ນໃຫ້ໂຈະການຜະລິດ. ສຳລັບ ໂຮງງານຜະລິດຖ່ານ, ເຕົາເຜົາຖ່ານ ທີ່ບໍ່ໄດ້ຮັບອະນຸຍາດສ້າງຕັ້ງ ແລະ ດຳເນີນກິດຈະການ ແມ່ນໃຫ້ຍຸບເລີກ ພ້ອມທັງດຳເນີນຄະດີ ຕາມກົດໝາຍ;

3. ສຳລັບ ຖ່ານຂາວທີ່ຜະລິດຈາກໄມ້ຕິ້ວ, ຖ່ານອັດແທ່ງ ຫຼື ອັດເມັດຈາກຂີ້ເລື່ອຍ ແມ່ນສາມາດສົ່ງອອກໄດ້ ໂດຍປະຕິບັດໃຫ້ສອດຄ່ອງ ກັບ ຂໍ້ຕົກລົງ ສະບັບເລກທີ 0851/ອຄ, ລົງວັນ ທີ 14 ກັນຍາ 2021 (ມາດຕາ 1 ເອກະສານຊ້ອນທ້າຍ II, ຂໍ້ທີ 2.1 ແລະ 2.2) ບົນພື້ນຖານ ວັດຖຸດິບ (ໄມ້) ທີ່ນຳມາຜະລິດຖ່ານ ຕ້ອງໄດ້ຮັບອະນຸຍາດຕົວເລກແຜນການຂຸດຄົ້ນຈາກລັດຖະບານ. ພ້ອມດຽວກັນນັ້ນ, ຜູ້ປະກອບການ ຫຼື ບໍລິສັດທີ່ດຳເນີນທຸລະກິດ ຜະລິດ ແລະ ສົ່ງອອກຖ່ານຂາວ ຕ້ອງໄດ້ຮັບອະນຸຍາດສ້າງຕັ້ງ, ຈົດທະບຽນຖືກຕ້ອງຕາມລະບຽບກົດໝາຍ ແລະ ຕ້ອງມີແຜນຊຸກຍູ້ ແລະ ສົ່ງເສີມການປູກໄມ້ຕິ້ວ ເພື່ອສະໜອງໃຫ້ແກ່ການຜະລິດຂອງຕົນຢ່າງຕໍ່ເນື່ອງ ລວມທັງ ມີການຄຸ້ມຄອງແຫຼ່ງວັດຖຸດິບ ແລະ ການຄຸ້ມຄອງການສົ່ງອອກ ເພື່ອຫຼີກລ່ຽງບໍ່ໃຫ້ມີການສວຍໂອກາດດຳເນີນວຽກງານດັ່ງກ່າວ ທີ່ບໍ່ສອດຄ່ອງກັບລະບຽບກົດໝາຍ ທີ່ໄດ້ກຳນົດໄວ້.

4. ມອບໃຫ້ ກົມກວດກາປ່າໄມ້ ແລະ ກົມປ່າໄມ້ ສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງ ລົງຊຸກຍູ້, ຕິດຕາມ ການຈັດຕັ້ງປະຕິບັດແຈ້ງການສະບັບນີ້ ຢ່າງເຂັ້ມງວດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດ ຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ລັດຖະມົນຕີ

**<u>ບ່ອນນຳສົ່ງ:</u>**

- ທ່ານ ລມຕ ແລະ ຮລມຕ 03 ສະບັບ
- ຫ້ອງການ ກປ 01 ສະບັບ
- ກົມກວດກາປ່າໄມ້ 01 ສະບັບ
- ກົມປ່າໄມ້ 01 ສະບັບ
- ເກັບມ້ຽນ 01 ສະບັບ

ກະຊວງກະສິກຳ ແລະ ປ່າໄມ້ ລັດຖະມົນຕີ

ພ. ... [signature]

ປອ. ເພັດ ພົມພິພັກ